# BENRAMINE

**Generic name**: Chlorpheniramine maleate

**Brand Name:** BENRAMINE

**Composition**: Chlorpheniramine maleate………4mg

**Indications:**

- This product is suitable for skin allergies such as urticaria, eczema, dermatitis, drug rash, skin pruritus, neurodermatitis, insect bites, and solar dermatitis. It can also be used for allergic rhinitis, vasoconstrictive rhinitis, drug and food allergies.

**Dosage:**

Adults, take one tablet three times a day.

**Contraindications:**

- Hypersensitivity to chlorpheniramine.

**Warnings:**

- Elderly and children should use under the guidance of a physician.
- Use caution while driving, operating machinery or using precision instruments.
- Pregnant and lactating women should use with caution.
- Patients with bladder neck obstruction, pyloric duodenal obstruction, hyperthyroidism, glaucoma, peptic ulcer, hypertension, and prostate enlargement should use with caution.
- Patients who are allergic, do not use this product.

**Adverse Effects:**

- Common adverse reactions: abdominal pain, diarrhea, nausea, vomiting, loss of appetite, constipation, difficulty urinating, dizziness, drowsiness, dry mouth, sexual difficulties, fatigue, and vaginal dryness.
- Rare adverse reactions: Confusion, difficulty sleeping, excitement, hallucinations, coordination disorders, nightmares, painful urination, nervousness, rash, bleeding diathesis, visual abnormalities.

**Dosage form:** Pale yellow tablet.

**Expiry date**: 24 months from the date of manufacture.

**Packaging:** 10 tablets/blister, 50 blisters/box.

**Storage:**

- Store in original packaging in a cool dry place.
- Keep out of reach of children.

**Manufactured by:**

Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel:  +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# BENRAMINE

**ຊື່ທົ່ວໄປ**: Chlorpheniramine maleate
**ຊື່ຜະລິດຕະພັນ:** BENRAMINE
**ສ່ວນປະກອບ:** Chlorpheniramine maleate........................4mg
**ຂໍ້ບົ່ງໃຊ້:**

- ເປັນຢາແກ້ແພ້ຫຼື ຕ້ານອິດສຕາມິນ ຖືກນຳໃຊ້ໃນການປິ່ນປົວ ບັນດາອາການແພ້ຕ່າງໆ ເຊັ່ນ ເປັນຜື່ນຕາມຕົນໂຕ, ເປັນຫວັດຈາກການແພ້ ຕ່າງໆ, ບັນເທົາອາການເປັນຫວັດ (ຫຼຸດຜ່ອນນ້ຳມູກ) ແລະ ອາການຄັນ. ເຊີ່ງອາການແພ້ອາດມາຈາກ ຜິວໜັງອັກເສບ, ເປັນຜື່ນມາຈາກຢາ, ການກະຕຸ້ນປາຍປະສາດຜິວໜັງ, ແມງໄມ້ກັດຕອດ, ຜິວໜັງອັກເສບຈາກແສງແດດ, ໂພ່ງດັງອັກເສບຈາກພູມແພ້, ຫຼອດເລືອດດັງຕີບຕັນ ຈາກການແພ້ຢາແລະອາຫານ.

**ວິທີໃຊ້:**

- ຜູ້ໃຫຍ່, ຮັບປະທານຄັ້ງລະເມັດ ຮັບປະທານ 3 ຄັ້ງ ຕໍ່ວັນ.

**ຂໍ້ຫ້າມໃຊ້:**

- ຫ້າມໃຊ້ໃນຜູ້ແພ້ຢາຄໍລາເຟນຣາມາຍ(Chlorpheniramine).

**ຄຳເຕືອນ:**

- ການໃຊ້ຢາໃນຜູ້ສູງອາຍຸ ແລະ ເດັກນ້ອຍ ຄວນໃຊ້ຕາມການແນະນຳຂອງແພດ.
- ເນື່ອງຈາກຢານີ້ ມີຜົນເຮັດໃຫ້ງ່ວງນອນ ດັ່ງນັ້ນ ໃນລະຫວ່າງການນຳໃຊ້ຢາບໍ່ຄວນຂັບຂີ່ຍານພາຫະນະ ຫຼືເຮັດວຽກກ່ຽວກັບກົນຈັກ, ຫຼືເຮັດວຽກໃນທີ່ສູງອາດສາມາດພາໃຫ້ເປັນອັນຕະລາຍໄດ້.
- ແມ່ຍິງຖືພາ ແລະ ລ້ຽງລູກດ້ວຍນ້ຳນົມແມ່ ຄວນໃຊ້ດ້ວຍຄວາມລະມັດລະວັງ.
- ຄົນເຈັບທີ່ມີບັນຫາກ່ຽວກັບ ທໍ່ຍ່ຽວ, ລຳໄສ້ນ້ອຍອຸດຕັນ, ຕ່ອມໄທລອຍທຳງານຜິດປົກກະຕິ, ເປັນຕ້ອຫີນ, ເປັນແຜໃນກະເພາະອາຫານ, ມີບັນຫາຄວາມດັນເລືອດສູງ, ຕ່ອມລູກໝາກໃຫຍ່ ຄວນນຳໃຊ້ຢ່າງລະມັດລະວັງ.

**ຜົນຂ້າງຄຽງ:**

- ຢານີ້ເຮັດໃຫ້ງ່ວງນອນ, ມຶນງົງ ວິນຫົວ, ປວດຫົວ, ຕາມົວ ເບິ່ງພາບບໍ່ເຫັນແຈ້ງ, ໃຈສັ່ນ, ຄວາມດັນເລືອດຕ່ຳ, ງຶດງໍ່, ມືສັ່ນ, ປັ່ນທ້ອງ, ຮາກ ເບື່ອອາຫານ, ຖອກທ້ອງ, ຢູ່ບໍ່ສະບາຍ, ທ້ອງຜູກ, ປັດສະວະລຳບາກ, ເປັນຜື່ນຄັນເຫຼົ່ານີ້ເປັນຕົ້ນ.
- ຜົນຂ້າງຄຽງທີ່ຮຸນແຮງຂອງຢາ ມີບັນຫາກ່ຽວກັບການເບິ່ງເຫັນ, ມີບັນຫາກ່ຽວກັບການຫາຍໃຈ, ອາການກະວົນກະວາຍ, ຕື່ນເຕັ້ນ, ວິຕົກກັງວົນ, ນອນບໍ່ຫຼັບ (ພົບໃນເດັກ), ໜ້າມືດ ວິນວຽນຄ້າຍເປັນລົມ, ຫົວໃຈເຕັ້ນບໍ່ສະໝ່ຳສະເໝີ, ໃຈສັ່ນ,  ເຈັບໜ້າເອິກ.

**ຮູບແບບຂອງຢາ:** ຢາເມັດສີເຫຼືອງອ່ອນ.
**ວັນໝົດອາຍຸ** : 24 ເດືອນ ນັບແຕ່ວັນຜະລິດ.
**ຂະໜາດບັນຈຸມັດຫໍ່:** 1 ກັບມີ 50 ແຜງ, 1 ແຜງມີ 10 ເມັດ.
**ການເກັບຮັກສາ:**

- ເກັບຮັກສາໃນກັບກ່ອງເດີມ, ປິດແຈບ ເກັບໄວ້ໃນທີ່ຮົ່ມ ບໍ່ໃຫ້ຖືກແສງແດດ.
- ເກັບຮັກສາຢາ ໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**

ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com